ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 236 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 20/ສພຊ, ລົງວັນທີ 12 ພະຈິກ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 27/ຄປຈ, ລົງວັນທີ 10 ທັນວາ 2020.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 20 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 12 / 11 / 20

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ ໃນວາລະກອງປະຊຸມ ຄັ້ງວັນທີ 12 ພະຈິກ 2020.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 88 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2020

# ກົດໝາຍ
# ວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຮ່ວມມືລະຫວ່າງປະເທດທາງອາຍາໃຫ້ຖືກຕ້ອງ ເພື່ອເຮັດໃຫ້ການຮ່ວມມື, ການສະກັດກັ້ນ ແລະ ຕ້ານອາຊະຍາກຳ, ການສືບສວນ-ສອບສວນ ແລະ ການຮ້ອງຟ້ອງຄະດີອາຍາ ມີປະສິດທິພາບ, ມີປະສິດທິຜົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ ແລະ ພົນລະເມືອງ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການຮ່ວມມືລະຫວ່າງປະເທດທາງອາຍາ**

ການຮ່ວມມືລະຫວ່າງປະເທດທາງອາຍາ ແມ່ນ ການໃຫ້ການຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງອາຍາ ລະຫວ່າງລັດ ແຫ່ງ ສປປ ລາວ ກັບ ລັດຕ່າງປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລັດທີ່ຮ້ອງຂໍ** ໝາຍເຖິງ ລັດໃດໜຶ່ງ ທີ່ຮ້ອງຂໍການຮ່ວມມືຈາກລັດອື່ນທາງອາຍາ;
2. **ລັດທີ່ຖືກຮ້ອງຂໍ** ໝາຍເຖິງ ລັດໃດໜຶ່ງ ຊຶ່ງໄດ້ຮັບການຮ້ອງຂໍການຮ່ວມມືຈາກລັດອື່ນທາງອາຍາ;
3. **ເຄື່ອງມືທີ່ໃຊ້ໃນການກໍ່ອາຊະຍາກຳ** ໝາຍເຖິງ ເຄື່ອງມື ຫຼື ວັດຖຸສິ່ງຂອງ ຫຼື ຊັບສິນ ທີ່ນຳໃຊ້ເຂົ້າໃນການກໍ່ອາຊະຍາກຳໃດໜຶ່ງ;

4. **ອົງການດຳເນີນຄະດີອາຍາ** ໝາຍເຖິງ ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

5. **ອາຊະຍາກຳ** ໝາຍເຖິງ ການປະພຶດ ຫຼື ການກະທຳ ທີ່ພາໃຫ້ມີການລົງໂທດທາງອາຍາ ຕາມກົດໝາຍ ຂອງ ສປປ ລາວ ແລະ ຕາມກົດໝາຍຂອງລັດທີ່ຮ້ອງຂໍ;

6. **ທາງອາຍາ** ໝາຍເຖິງ ເລື່ອງທີ່ກ່ຽວຂ້ອງກັບປະມວນກົດໝາຍອາຍາ ແລະ ການດຳເນີນຄະດີອາຍາ;

7. **ເອກະລັກຂອງບຸກຄົນ** ໝາຍເຖິງ ຕຳນິຮູບປະພັນ, ບຸກຄະລິກກະພາບ ແລະ ອື່ນໆ.

**ມາດຕາ 4 ຫຼັກການ ການຮ່ວມມືລະຫວ່າງປະເທດທາງອາຍາ**

ການຮ່ວມມືລະຫວ່າງປະເທດທາງອາຍາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ;

2. ເຄົາລົບ ແລະ ປະຕິບັດຕາມ ລັດຖະທຳມະນູນ, ກົດໝາຍ ຂອງ ສປປ ລາວ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

3. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

4. ເຄົາລົບ ກຽດສັກສີ, ສິດ ແລະ ເສລີພາບ ຂອງບຸກຄົນທີ່ກ່ຽວຂ້ອງ;

5. ຮັບປະກັນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃຫ້ຖືກຕ້ອງ ແລະ ວ່ອງໄວ.

**ມາດຕາ 5 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການຮ່ວມມືທາງອາຍາ ລະຫວ່າງ ລັດ ແຫ່ງ ສປປ ລາວ ກັບ ລັດຕ່າງປະເທດ ທີ່ຮ້ອງຂໍ ຫຼື ຖືກຮ້ອງຂໍ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບການສົ່ງຜູ້ຮ້າຍຂ້າມແດນ, ການໂອນຕົວຜູ້ຖືກສານຕັດສິນລົງໂທດ, ການໂອນສຳນວນຄະດີອາຍາ, ເວັ້ນເສຍແຕ່ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ຫາກກຳນົດໄວ້ເປັນຢ່າງອື່ນ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ຊຸກຍູ້ ແລະ ສົ່ງເສີມ ການຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ສຳມະນາ, ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ, ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເພື່ອພັດທະນາວຽກງານຮ່ວມມືລະຫວ່າງປະເທດທາງອາຍາ.

# ພາກທີ II

# ການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາຂອງຕ່າງປະເທດ

## ໝວດທີ 1

## ຂອບເຂດການຮ້ອງຂໍການຮ່ວມມື ແລະ ການປະຕິເສດການຮ້ອງຂໍການຮ່ວມມື

**ມາດຕາ 7 ຂອບເຂດການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ**

ການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ມີຂອບເຂດ ດັ່ງນີ້:

1. ການເອົາຄຳໃຫ້ການ;
2. ການສະໜອງຂໍ້ມູນ ຫຼັກຖານ;
3. ການເຂົ້າຮ່ວມຂອງບຸກຄົນໃນລັດທີ່ຮ້ອງຂໍ;
4. ການເຂົ້າຮ່ວມໃນການດຳເນີນຄະດີອາຍາ ຂອງບຸກຄົນທີ່ປະຕິບັດໂທດ ຫຼື ຖືກກັກຂັງ;
5. ການຊອກຮູ້ບ່ອນຢູ່ ຫຼື ເອກະລັກຂອງບຸກຄົນ;
6. ການກວດຄົ້ນ, ການຍຶດ ແລະ ສົ່ງມອບຂໍ້ມູນຫຼັກຖານ;
7. ການຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ;
8. ການຮິບຊັບ ແລະ ຮິບວັດຖຸສິ່ງຂອງ;
9. ບັນຫາອື່ນ ທາງອາຍາ ທີ່ຮ້ອງຂໍ ຫຼື ຖືກຮ້ອງຂໍ.

**ມາດຕາ 8 ການປະຕິເສດການຮ້ອງຂໍການຮ່ວມມື**

ສປປ ລາວ ປະຕິເສດການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ການໃຫ້ຄວາມຮ່ວມມືນັ້ນ ອາດສົ່ງຜົນກະທົບ ຕໍ່ອະທິປະໄຕ, ຄວາມສະຫງົບ, ຄວາມໝັ້ນຄົງຂອງຊາດ ຫຼື ຜົນປະໂຫຍດລວມ ຂອງ ສປປ ລາວ;

2. ການໃຫ້ຄວາມຮ່ວມມືນັ້ນ ບໍ່ສອດຄ່ອງກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ກົດໝາຍຂອງ ສປປ ລາວ;

3. ພຶດຕິກຳທີ່ພົວພັນກັບການຮ້ອງຂໍໃນການຮ່ວມມືນັ້ນ ບໍ່ເປັນການກະທຳຜິດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນ ຂອງ ສປປ ລາວ ແລະ ກົດໝາຍ ຂອງລັດທີ່ຮ້ອງຂໍ;

4. ການຮ້ອງຂໍການຮ່ວມມືນັ້ນ ພົວພັນເຖິງການສືບສວນ-ສອບສວນ, ການຮ້ອງຟ້ອງ ຫຼື ການລົງໂທດບຸກຄົນໃດໜຶ່ງ ຍ້ອນການກະທຳຜິດທາງດ້ານການເມືອງ ຫຼື ທາງທະຫານ;

5. ການຮ້ອງຂໍການຮ່ວມມືນັ້ນ ມີພື້ນຖານທີ່ພາໃຫ້ເຊື່ອວ່າ ໄດ້ສ້າງຂຶ້ນ ເພື່ອຈຸດປະສົງຂອງການສືບສວນ-ສອບສວນ, ສັ່ງຟ້ອງ, ລົງໂທດ ຫຼື ກໍ່ຄວາມເສຍຫາຍຢ່າງອື່ນ ຕໍ່ບຸກຄົນໃດໜຶ່ງ ຍ້ອນສາເຫດທາງດ້ານເຊື້ອຊາດ, ສາສະໜາ, ເພດ, ເຜົ່າ, ສັນຊາດ ຫຼື ບັນຫາທາງດ້ານການເມືອງຂອງບຸກຄົນນັ້ນ;

6. ລັດທີ່ຮ້ອງຂໍນັ້ນ ບໍ່ໄດ້ຢືນຢັນວ່າ ຕົນຈະໃຫ້ການຮ່ວມມືຕໍ່ບັນຫາທີ່ຄ້າຍຄືກັນ ທີ່ ສປປ ລາວ ອາດຮ້ອງຂໍ;

7. ລັດທີ່ຮ້ອງຂໍ ບໍ່ໄດ້ກຳນົດຈະແຈ້ງ ລາຍລະອຽດ ແລະ ຈຸດປະສົງ ຂອງການນຳໃຊ້ຂໍ້ມູນ ຫຼື ຄວາມຊ່ວຍເຫຼືອໃນຄຳຮ້ອງຂໍຂອງຕົນ;

8. ການໃຫ້ຄວາມຮ່ວມມືນັ້ນ ອາດສ້າງຄວາມເສຍຫາຍຕໍ່ຮູບຄະດີ ຫຼື ຂັ້ນຕອນໃນການດຳເນີນຄະດີອາຍາ ທີ່ກຳລັງດຳເນີນ ຢູ່ ສປປ ລາວ ຫຼື ຂັດກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຂອງ ສປປ ລາວ;

9. ການຮ້ອງຂໍການຮ່ວມມືນັ້ນ ອາດສ້າງຄວາມເສຍຫາຍ ຫຼື ຄວາມບໍ່ປອດໄພ ຕໍ່ບຸກຄົນໃດໜຶ່ງ ທີ່ຢູ່ພາຍໃນ ຫຼື ນອກດິນແດນ ສປປ ລາວ;

10. ການຮ້ອງຂໍການຮ່ວມມືນັ້ນ ອາດສ້າງພາລະອັນໜັກໜ່ວງ ໃຫ້ແກ່ ສປປ ລາວ.

## ໝວດທີ 2
## ການຮ້ອງຂໍ ແລະ ການພິຈາລະນາການຮ້ອງຂໍ

### ມາດຕາ 9 ການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ

ໃນການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຈາກລັດທີ່ຮ້ອງຂໍ ມາຍັງ ສປປ ລາວ ໃຫ້ຍື່ນຄຳຮ້ອງຂໍ ຕໍ່ອົງການໃຈກາງປະສານງານ ໂດຍຜ່ານທາງການທູດ. ສຳລັບການຍື່ນຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ໃຫ້ປະຕິບັດຕາມກົນໄກທີ່ໄດ້ກຳນົດໄວ້ໃນສົນທິສັນຍານັ້ນ.

### ມາດຕາ 10 ຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ

ຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຕ້ອງມີເນື້ອໃນ ດັ່ງນີ້:

1. ຊື່, ສະຖານທີ່ ຂອງອົງການທີ່ມີສິດອຳນາດ ຂອງລັດທີ່ຮ້ອງຂໍ;
2. ຈຸດປະສົງ ແລະ ເຫດຜົນຂອງການຮ້ອງຂໍ ແລະ ປະເພດ ຫຼື ລັກສະນະຂອງການຮ່ວມມືທີ່ຕ້ອງການ;
3. ປະເດັນການຮ້ອງຂໍ ຫຼື ການຂໍຮ້ອງສະເພາະໃດໜຶ່ງ;
4. ລັກສະນະຂອງບັນຫາອາຍາ, ເຫດການ, ບົດສະຫຼຸບຄະດີ ແລະ ຄຳຖະແຫຼງ ທີ່ກ່ຽວຂ້ອງກັບການຮ້ອງຂໍ ເປັນຕົ້ນ ເນື້ອຄະດີ, ຄວາມຜິດ ແລະ ກົດໝາຍທີ່ກ່ຽວຂ້ອງຂອງລັດທີ່ຮ້ອງຂໍ ລວມທັງໂທດສູງສຸດ;
5. ກຳນົດເວລາໃນການປະຕິບັດຄຳຮ້ອງຂໍ;
6. ບ່ອນຢູ່ຂອງຜູ້ທີ່ຕ້ອງການເອົາຄຳໃຫ້ການ ແລະ ປະເດັນທີ່ຕ້ອງການໃຫ້ເອົາຄຳໃຫ້ການ;
7. ບ່ອນເກັບມ້ຽນຂອງກາງ ຫຼື ຫຼັກຖານ.

ຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຕ້ອງປະກອບເອກະສານທີ່ກ່ຽວຂ້ອງກັບການຮ້ອງຂໍມາພ້ອມ.

ຄຳຮ້ອງຂໍ ແລະ ເອກະສານປະກອບນັ້ນ ຕ້ອງລົງ ວັນທີ ເດືອນ ປີ, ລາຍເຊັນ ແລະ ປະທັບຕາ ຂອງອົງການລັດທີ່ຮ້ອງຂໍ ພ້ອມທັງແປເປັນພາສາລາວ ຫຼື ພາສາອື່ນ ຕາມສົນທິສັນຍາໄດ້ກຳນົດໄວ້.

### ມາດຕາ 11 ການພິຈາລະນາຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ

ເມື່ອໄດ້ຮັບຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາຈາກລັດທີ່ຮ້ອງຂໍ, ອົງການໃຈກາງປະສານງານ ຕ້ອງກວດກາຄຳຮ້ອງຂໍ ແລະ ເອກະສານປະກອບ ກ່ຽວກັບການຮ້ອງຂໍດັ່ງກ່າວ ຖ້າເຫັນວ່າ ຖືກຕ້ອງ ແລະ ຄົບຖ້ວນແລ້ວ ຕ້ອງມອບໃຫ້ອົງການດຳເນີນຄະດີອາຍາ ດຳເນີນການໃຫ້ການຮ່ວມມື. ໃນກໍລະນີເຫັນວ່າບໍ່ຖືກ

ຕ້ອງ ຫຼື ບໍ່ຄົບຖ້ວນ ອົງການໃຈກາງປະສານງານ ຕ້ອງແຈ້ງໃຫ້ລັດທີ່ຮ້ອງຂໍປັບປຸງ ຫຼື ປະກອບຄືນໃໝ່ ຫຼື ປະຕິເສດການຮ້ອງຂໍການຮ່ວມມືດັ່ງກ່າວ.

ອົງການດຳເນີນຄະດີອາຍາ ຕ້ອງດຳເນີນການໃຫ້ການຮ່ວມມືໂດຍໄວ ຕາມເວລາທີ່ກຳນົດໄວ້ໃນຄຳຮ້ອງຂໍນັ້ນ ໂດຍສອດຄ່ອງກັບຫຼັກການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຂອງ ສປປ ລາວ.

ອົງການໃຈກາງປະສານງານ ຕ້ອງແຈ້ງໃຫ້ລັດທີ່ຮ້ອງຂໍຮັບຊາບ ກ່ຽວກັບຄວາມຄືບໜ້າ ຫຼື ບັນຫາທີ່ພາໃຫ້ການປະຕິບັດຄຳຮ້ອງຂໍຊັກຊ້າ ຫຼື ອາດຂໍໃຫ້ລັດທີ່ຮ້ອງຂໍນັ້ນ ສະໜອງຂໍ້ມູນເພີ່ມເຕີມ ໃນກໍລະນີທີ່ມີຄວາມຫຍຸ້ງຍາກໃນການປະຕິບັດຄຳຮ້ອງຂໍດັ່ງກ່າວ.

**ມາດຕາ 12 ການຮັກສາຄວາມລັບຂອງຂໍ້ມູນ**

ສປປ ລາວ ຕ້ອງຮັກສາຂໍ້ມູນ ກ່ຽວກັບການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຂອງລັດທີ່ຮ້ອງຂໍ ໄວ້ເປັນຄວາມລັບ, ບໍ່ເປີດເຜີຍຕໍ່ສາທາລະນະ ເພື່ອຜົນປະໂຫຍດຂອງຮູບຄະດີ ແລະ ບໍ່ຖືກເປີດເຜີຍ ຫຼື ຖືກນຳສົ່ງໄປຍັງລັດທີສາມ, ເວັ້ນເສຍແຕ່ໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກລັດທີ່ຮ້ອງຂໍ.

ລັດທີ່ຮ້ອງຂໍ ຕ້ອງນຳໃຊ້ມາດຕະການທີ່ຈຳເປັນ ຫຼື ຕາມກົດໝາຍພາຍໃນຂອງຕົນ ເພື່ອບໍ່ເຮັດໃຫ້ຂໍ້ມູນທີ່ໄດ້ມາຈາກການຮ່ວມມື ຕາມຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຖືກນຳໃຊ້ ຫຼື ເປີດເຜີຍ ຫຼື ໂອນມອບໃຫ້ບຸກຄົນອື່ນ ຫຼື ຖືກສວຍໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ ນອກຈາກທີ່ໄດ້ສະເໜີໄວ້ໃນຄຳຮ້ອງຂໍດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກ ສປປ ລາວ.

## ໝວດທີ 3
## ການດຳເນີນການຮ່ວມມືລະຫວ່າງປະເທດທາງອາຍາ

**ມາດຕາ 13 ການເອົາຄຳໃຫ້ການ**

ການເອົາຄຳໃຫ້ການ ບຸກຄົນໃດໜຶ່ງ ທີ່ຢູ່ ສປປ ລາວ ເພື່ອຈຸດປະສົງນຳໃຊ້ເຂົ້າໃນການດຳເນີນຄະດີອາຍາຢູ່ລັດທີ່ຮ້ອງຂໍ ຕ້ອງເປັນພື້ນຖານຄວາມສະໝັກໃຈຂອງບຸກຄົນດັ່ງກ່າວ ໂດຍສອດຄ່ອງກັບກົດໝາຍ ຂອງ ສປປ ລາວ.

**ມາດຕາ 14 ການສະໜອງຂໍ້ມູນ ຫຼັກຖານ**

ອົງການດຳເນີນຄະດີອາຍາ ຕ້ອງຊອກຫາ, ເກັບໂຮມຂໍ້ມູນ ຫຼັກຖານ ຕາມການຮ້ອງຂໍ ລວມທັງການຮຽກໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສະໜອງຂໍ້ມູນ ຫຼັກຖານໃຫ້ຕົນ ໂດຍສອດຄ່ອງກັບກົດໝາຍ ຂອງ ສປປ ລາວ ເພື່ອສະໜອງໃຫ້ລັດທີ່ຮ້ອງຂໍ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຖືກຮຽກຮ້ອງໃຫ້ສະໜອງຂໍ້ມູນ ຫຼັກຖານ ມີສິດປະຕິເສດການສະໜອງຂໍ້ມູນ ຫຼັກຖານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ ແຕ່ຕ້ອງແຈ້ງເປັນລາຍລັກອັກສອນ ກ່ຽວກັບການປະຕິເສດສະໜອງຂໍ້ມູນ ຫຼັກຖານຂອງຕົນນັ້ນ ຕໍ່ອົງການທີ່ມີສິດອຳນາດ.

ມາດຕາ 15 ການເຂົ້າຮ່ວມຂອງບຸກຄົນ ໃນລັດທີ່ຮ້ອງຂໍ

ໃນກໍລະນີ ມີການຮ້ອງຂໍໃຫ້ບຸກຄົນໃດໜຶ່ງ ທີ່ອາໄສຢູ່ດິນແດນ ຂອງ ສປປ ລາວ ໄປມີໜ້າໃນລັດທີ່ຮ້ອງຂໍ ບົນພື້ນຖານການຍິນຍອມຂອງຜູ້ກ່ຽວ, ສປປ ລາວ ອາດເຫັນດີໃຫ້ບຸກຄົນດັ່ງກ່າວ ໄປຍັງດິນແດນຂອງລັດທີ່ຮ້ອງຂໍ ເພື່ອ:

- ຊ່ວຍເຫຼືອໃນການສືບສວນ-ສອບສວນ ບັນຫາທີ່ພົວພັນເຖິງຄະດີອາຍາ;
- ເຂົ້າຮ່ວມໃນການດໍາເນີນຄະດີ ທີ່ພົວພັນເຖິງຄະດີອາຍາ, ຍົກເວັ້ນບຸກຄົນນັ້ນ ເປັນຜູ້ຖືກຫາ.

ອົງການໃຈກາງປະສານງານ ຕ້ອງແຈ້ງໃຫ້ລັດທີ່ຮ້ອງຂໍຮັບຊາບ ຖ້າບຸກຄົນດັ່ງກ່າວ ຫາກປະຕິເສດ ຫຼື ຍິນຍອມເຂົ້າຮ່ວມຕາມຄໍາຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ.

ລັດທີ່ຮ້ອງຂໍ ຕ້ອງຮັບປະກັນຄວາມປອດໄພ ແລະ ຮັບຜິດຊອບຄ່າໃຊ້ຈ່າຍ ໃນການເດີນທາງ, ຄ່າພັກເຊົາ, ຄ່າກິນ ລວມທັງຄ່າໃຊ້ຈ່າຍອື່ນ ເພື່ອອໍານວຍຄວາມສະດວກ ໃຫ້ແກ່ບຸກຄົນດັ່ງກ່າວ.

ມາດຕາ 16 ການເຂົ້າຮ່ວມໃນການດໍາເນີນຄະດີອາຍາ ຂອງບຸກຄົນທີ່ປະຕິບັດໂທດ ຫຼື ຖືກກັກຂັງ

ສປປ ລາວ ອາດພິຈາລະນາໃຫ້ບຸກຄົນທີ່ປະຕິບັດໂທດ ຫຼື ຖືກກັກຂັງ ຢູ່ ສປປ ລາວ ຖືກສົ່ງຕົວເປັນການຊົ່ວຄາວ ບົນພື້ນຖານການຍິນຍອມຂອງຜູ້ກ່ຽວ ເພື່ອໄປໃຫ້ການ ຫຼື ຊ່ວຍເຫຼືອ ໃນການດໍາເນີນຄະດີອາຍາ ຢູ່ລັດທີ່ຮ້ອງຂໍ.

ລັດທີ່ຮ້ອງຂໍ ຕ້ອງສືບຕໍ່ກັກຂັງຜູ້ກ່ຽວ ຕາມກົດໝາຍທີ່ກ່ຽວຂ້ອງຂອງລັດທີ່ຮ້ອງຂໍ ແລະ ພາຍຫຼັງສິ້ນສຸດການເອົາຄໍາໃຫ້ການ ຫຼື ຊ່ວຍເຫຼືອ ໃນການດໍາເນີນຄະດີອາຍາແລ້ວ ຕ້ອງສົ່ງບຸກຄົນດັ່ງກ່າວ ຄືນມາຍັງ ສປປ ລາວ.

ໄລຍະເວລາໃນການກັກຂັງຢູ່ລັດທີ່ຮ້ອງຂໍນັ້ນ ໃຫ້ນັບເຂົ້າໃນກໍານົດເວລາການປະຕິບັດໂທດຕັດອິດສະລະພາບ ຫຼື ການກັກຂັງ ຢູ່ ສປປ ລາວ.

ລັດທີ່ຮ້ອງຂໍ ຕ້ອງຮັບປະກັນຄວາມປອດໄພ ແລະ ຮັບຜິດຊອບຄ່າໃຊ້ຈ່າຍ ທີ່ພົວພັນກັບການສົ່ງຕົວບຸກຄົນທີ່ປະຕິບັດໂທດ ຫຼື ຖືກກັກຂັງ.

ມາດຕາ 17 ມາດຕະການຄວາມປອດໄພ

ບຸກຄົນໃດໜຶ່ງ ທີ່ໄປເຂົ້າຮ່ວມໃນການດໍາເນີນຄະດີອາຍາຢູ່ລັດທີ່ຮ້ອງຂໍ ໃນກໍລະນີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ແລະ 16 ຂອງກົດໝາຍສະບັບນີ້ ລັດທີ່ຮ້ອງຂໍ ຕ້ອງໃຫ້ການປົກປ້ອງ ແລະ ມີມາດຕະການຄວາມປອດໄພ ດັ່ງນີ້:

1. ບຸກຄົນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ຈະບໍ່ຖືກກັກຂັງ, ເວັ້ນເສຍແຕ່ບຸກຄົນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້;

2. ຈະບໍ່ຖືກບັງຄັບ, ນາບຂູ່ ຫຼື ນໍາໃຊ້ວິທີການອື່ນ ໃຫ້ສະໜອງຂໍ້ມູນ ຫຼັກຖານ ຫຼື ໃຫ້ການກ່ຽວກັບບັນຫາອື່ນ ນອກຈາກເນື້ອໃນທີ່ໄດ້ກໍານົດໄວ້ໃນຄໍາຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ;

3. ຈະບໍ່ຖືກດໍາເນີນຄະດີອາຍາ ບົນພື້ນຖານຄໍາໃຫ້ການຂອງຕົນ ໃນເວລາເຂົ້າຮ່ວມການໄຕ່ສວນຄະດີຢູ່ທີ່ປະຊຸມສານ ຫຼື ໂດຍອົງການດໍາເນີນຄະດີອາຍາ ຢູ່ລັດທີ່ຮ້ອງຂໍ;

4. ຈະບໍ່ຖືກຮ້ອງຟ້ອງດໍາເນີນຄະດີແພ່ງ ຍ້ອນການກະທໍາ ຫຼື ການເມີນເສີຍຂອງຜູ້ກ່ຽວ ກ່ອນການອອກເດີນທາງໄປຍັງລັດທີ່ຮ້ອງຂໍ.

### ມາດຕາ 18 ການຊອກຮູ້ບ່ອນຢູ່ ຫຼື ເອກະລັກຂອງບຸກຄົນ

ອົງການດຳເນີນຄະດີອາຍາ ຂອງ ສປປ ລາວ ຈະດຳເນີນການຊອກຮູ້ ບ່ອນຢູ່ ຫຼື ເອກະລັກຂອງບຸກຄົນ ທີ່ກຳນົດໄວ້ໃນຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ໂດຍປະຕິບັດຕາມກົດໝາຍຂອງ ສປປ ລາວ.

### ມາດຕາ 19 ການກວດຄົ້ນ, ການຢຶດ ແລະ ສົ່ງມອບ ຂໍ້ມູນຫຼັກຖານ

ອົງການດຳເນີນຄະດີອາຍາ ຂອງ ສປປ ລາວ ດຳເນີນການ ກວດຄົ້ນ, ຢຶດ ແລະ ສົ່ງມອບຂໍ້ມູນ ຫຼັກຖານ ທີ່ເປັນເອກະສານ, ຂໍ້ມູນທີ່ບັນທຶກ ແລະ ວັດຖຸສິ່ງຂອງຕາມຄຳຮ້ອງຂໍ ໂດຍມີເງື່ອນໄຂ ດັ່ງນີ້:

- ຄຳຮ້ອງຂໍນັ້ນ ຕ້ອງກຳນົດລະອຽດ ກ່ຽວກັບຂໍ້ມູນ ຫຼັກຖານ;
- ກົດໝາຍຂອງ ສປປ ລາວ ອະນຸຍາດໃຫ້ດຳເນີນການໄດ້.

ອົງການໃຈກາງປະສານງານ ຕ້ອງໄດ້ແຈ້ງໃຫ້ລັດທີ່ຮ້ອງຂໍຮັບຊາບ ກ່ຽວກັບຜົນຂອງການກວດຄົ້ນ ແລະ ການຢຶດຂໍ້ມູນ ຫຼັກຖານດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ພ້ອມທັງປຶກສາຫາລື ວິທີການ ແລະ ວັນ ເວລາໃນການສົ່ງມອບຂໍ້ມູນ ຫຼັກຖານ.

### ມາດຕາ 20 ການຢຶດ ຫຼື ອາຍັດ ຊັບ, ວັດຖຸສິ່ງຂອງ

ອົງການດຳເນີນຄະດີອາຍາ ຂອງ ສປປ ລາວ ດຳເນີນການຢຶດ ຫຼື ອາຍັດ ຊັບ, ວັດຖຸສິ່ງຂອງ ທີ່ຢູ່ ສປປ ລາວ ຕາມຄຳຮ້ອງຂໍ ໂດຍມີເງື່ອນໄຂ ດັ່ງນີ້:

- ໄປພ້ອມກັບຄຳຮ້ອງຂໍນັ້ນ ຕ້ອງໃຫ້ມີຄຳສັ່ງຢຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ ສະບັບຕົ້ນ ພ້ອມທັງຂໍ້ກຳນົດ, ບົດບັນຍັດທາງດ້ານກົດໝາຍ ທີ່ອະນຸຍາດໃຫ້ລັດທີ່ຮ້ອງຂໍ ສາມາດດຳເນີນການດັ່ງກ່າວໄດ້;
- ກົດໝາຍຂອງ ສປປ ລາວ ອະນຸຍາດໃຫ້ດຳເນີນການໄດ້.

ອົງການໃຈກາງປະສານງານ ຕ້ອງແຈ້ງໃຫ້ລັດທີ່ຮ້ອງຂໍຮັບຊາບ ກ່ຽວກັບຜົນຂອງການຢຶດ ຫຼື ອາຍັດ ຊັບ, ວັດຖຸສິ່ງຂອງດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

ສຳລັບ ການຄຸ້ມຄອງ ແລະ ປົກປັກຮັກສາ ຊັບ, ວັດຖຸສິ່ງຂອງ ທີ່ໄດ້ຢຶດ ແລະ ອາຍັດນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຂອງ ສປປ ລາວ.

### ມາດຕາ 21 ການສົ່ງຂໍ້ມູນ ຫຼັກຖານຄືນ

ລັດທີ່ຮ້ອງຂໍ ຕ້ອງສົ່ງຂໍ້ມູນ ຫຼັກຖານທີ່ໄດ້ສະໜອງໃຫ້ແລ້ວນັ້ນ ຄືນໃຫ້ ສປປ ລາວ ຕາມທີ່ໄດ້ຕົກລົງກັນ ພາຍຫຼັງການດຳເນີນຄະດີອາຍາສິ້ນສຸດລົງ.

ໃນກໍລະນີ ຫາກມີຄວາມຈຳເປັນນຳໃຊ້ຂໍ້ມູນ ຫຼັກຖານດັ່ງກ່າວ ໃນການດຳເນີນຄະດີອາຍາໃດໜຶ່ງ ສປປ ລາວ ມີສິດຮ້ອງຂໍໃຫ້ລັດທີ່ຮ້ອງຂໍ ສົ່ງຂໍ້ມູນ ຫຼັກຖານຄືນໃຫ້ ສປປ ລາວ ກ່ອນສິ້ນສຸດການດຳເນີນຄະດີ.

### ມາດຕາ 22 ການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ

ເອກະສານ ທີ່ຄັດຕິດຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍານັ້ນ ຕ້ອງມີການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຈາກລັດທີ່ຮ້ອງຂໍ ຕາມການສະເໜີຂອງອົງການໃຈກາງປະສານງານ ຂອງ ສປປ ລາວ.

ເອກະສານໃດໜຶ່ງ ຈະຖືວ່າໄດ້ຮັບການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງແລ້ວ ກໍຕໍ່ເມື່ອ ໄດ້ຮັບການລົງນາມ ແລະ/ຫຼື ປະທັບຕາທາງລັດຖະການຂອງສານ ຫຼື ອົງການທີ່ມີສິດອຳນາດ ຕາມກົດໝາຍກ່ຽວຂ້ອງຂອງລັດທີ່ຮ້ອງຂໍ.

ເອກະສານ ທີ່ສົ່ງໃຫ້ກັນທາງເອເລັກໂຕຣນິກ ເປັນຕົ້ນ ຮູບຖ່າຍ, ລາຍນິ້ວມື, ຮູບຖ່າຍ ເພື່ອພິສູດຕຳນິຮູບປະພັນຂອງບຸກຄົນ, ສຳເນົາເອກະສານ ຖ້າຫາກມີການຢັ້ງຢືນຈາກອົງການທີ່ມີສິດອຳນາດຂອງລັດທີ່ຮ້ອງຂໍ ກໍມີຜົນໃຊ້ໄດ້ເຊັ່ນດຽວກັນກັບເອກະສານທີ່ສົ່ງທາງໄປສະນີ ຫຼື ສົ່ງດ້ວຍມື.

**ມາດຕາ 23 ການປະຕິບັດການຮ້ອງຂໍຜ່ານທາງເອເລັກໂຕຣນິກ**

ການປະຕິບັດການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ອາດດຳເນີນຜ່ານທາງເອເລັກໂຕຣນິກ ຕາມການສະເໜີຂອງລັດທີ່ຮ້ອງຂໍ ແລະ/ຫຼື ຕາມເງື່ອນໄຂທີ່ສາມາດປະຕິບັດໄດ້ ຂອງອົງການດຳເນີນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຂອງ ສປປ ລາວ.

**ມາດຕາ 24 ຄ່າໃຊ້ຈ່າຍໃນການປະຕິບັດຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ**

ລັດທີ່ຮ້ອງຂໍ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ ໃນການປະຕິບັດຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ດັ່ງນີ້:

1. ຄ່າທຳນຽມ ແລະ ຄ່າບໍລິການ ຂອງການໃຫ້ຄຳປຶກສາ, ຄ່າວ່າຄວາມຂອງທະນາຍຄວາມ, ຄ່າປ່ອຍການຂອງບຸກຄົນ ທີ່ຕ້ອງການໃຫ້ເອົາຫຼັກຖານ ຫຼື ນັກຊ່ຽວຊານ ຕາມຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ;

2. ຄ່າແປພາສາ, ຄ່າທຳນຽມ ແລະ ຄ່າບໍລິການ ການຢັ້ງຢືນເອກະສານ, ຄ່າສຳເນົາ ເອກະສານ ແລະ ຂໍ້ມູນ;

3. ຄ່າໃຊ້ຈ່າຍ ທີ່ພົວພັນກັບການສົ່ງບຸກຄົນໄປຍັງດິນແດນຂອງລັດທີ່ຮ້ອງຂໍ ແລະ ກັບຄືນ ສປປ ລາວ ລວມທັງຄ່າໃຊ້ຈ່າຍໃນການເດີນທາງ, ຄ່າພັກເຊົາ, ຄ່າກິນ, ຄ່າທຳນຽມ ແລະ ຄ່າບໍລິການ, ຄ່າປ່ອຍການ ແລະ ຄ່າໃຊ້ຈ່າຍອື່ນ ຕາມການຮ້ອງຂໍຂອງຜູ້ກ່ຽວ;

4. ຄ່າໃຊ້ຈ່າຍ ທີ່ພົວພັນເຖິງການນຳສົ່ງເຈົ້າໜ້າທີ່ຄວບຄຸມກັກຂັງ ຫຼື ຕິດຕາມ;

5. ຄ່າໃຊ້ຈ່າຍ ທີ່ພົວພັນເຖິງການຕິດຕໍ່ສື່ສານທາງເອເລັກໂຕຣນິກ.

ນອກຈາກຄ່າໃຊ້ຈ່າຍ ທີ່ໄດ້ກຳນົດໃນ 5 ຂໍ້ ຂອງມາດຕານີ້ ສປປ ລາວ ຈະເປັນຜູ້ຮັບຜິດຊອບ. ໃນກໍລະນີທີ່ມີຄ່າໃຊ້ຈ່າຍຫຼວງຫຼາຍ ສປປ ລາວ ແລະ ລັດທີ່ຮ້ອງຂໍ ຕ້ອງປຶກສາຫາລືກັນ ກ່ຽວກັບການສືບຕໍ່ ຫຼື ບໍ່ສືບຕໍ່ປະຕິບັດຄຳຮ້ອງຂໍດັ່ງກ່າວ.

ໃນກໍລະນີສົນທິສັນຍາວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ ທີ່ ສປປ ລາວ ເປັນພາຄີ ຫາກໄດ້ກຳນົດກ່ຽວກັບຄ່າໃຊ້ຈ່າຍໃນການດຳເນີນການຮ່ວມມືທາງອາຍາ ກໍໃຫ້ປະຕິບັດຕາມສົນທິສັນຍານັ້ນ.

**ມາດຕາ 25 ການແຈ້ງຜົນໄດ້ຮັບ**

ລັດທີ່ຮ້ອງຂໍ ຕ້ອງແຈ້ງຜົນໄດ້ຮັບ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ໃຫ້ ສປປ ລາວ ໃນນາມລັດທີ່ຖືກຮ້ອງຂໍ ຮັບຊາບໂດຍໄວ.

## ໝວດທີ 4
## ການຮິບຊັບ ແລະ ຮິບວັດຖຸສິ່ງຂອງ

**ມາດຕາ 26 ການຮິບຊັບ ແລະ ຮິບວັດຖຸສິ່ງຂອງ**

ເມື່ອໄດ້ຮັບຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ກ່ຽວກັບການຮິບຊັບ ແລະ ຮິບວັດຖຸສິ່ງຂອງ ຕາມຄຳຕັດສິນຂອງສານຕ່າງປະເທດ, ອົງການໃຈກາງປະສານງານ ຕ້ອງພິຈາລະນາ ມອບໃຫ້ອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ ບ່ອນຊັບ ຫຼື ວັດຖຸສິ່ງຂອງນັ້ນຕັ້ງຢູ່ ຄົ້ນຄວ້າ ເພື່ອສະເໜີໃຫ້ສານປະຊາຊົນແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ ພິຈາລະນາຕັດສິນ ກ່ຽວກັບການຮິບຊັບ ຫຼື ຮິບວັດຖຸສິ່ງຂອງນັ້ນ.

ໃນກໍລະນີຊັບ ຫຼື ວັດຖຸສິ່ງຂອງ ຍັງບໍ່ທັນໄດ້ອອກຄຳສັ່ງຍຶດ ຫຼື ອາຍັດ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ ແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ ຕ້ອງອອກຄຳສັ່ງຍຶດ ຫຼື ອາຍັດຊັບ ຫຼື ວັດຖຸສິ່ງຂອງດັ່ງກ່າວ ກ່ອນທີ່ສານຈະພິຈາລະນາ.

**ມາດຕາ 27 ການພິຈາລະນາ ກ່ຽວກັບການຮິບຊັບ ແລະ ຮິບວັດຖຸສິ່ງຂອງ**

ພາຍຫຼັງໄດ້ຮັບການມອບໝາຍຈາກອົງການໃຈກາງປະສານງານແລ້ວ ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ ຕ້ອງຄົ້ນຄວ້າຄຳຮ້ອງຂໍດັ່ງກ່າວ ພ້ອມທັງເກັບໂຮມຫຼັກຖານທີ່ຈຳເປັນ ແລ້ວສະເໜີໃຫ້ສານປະຊາຊົນຂັ້ນແຂວງ ພິຈາລະນາຕັດສິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຂອງ ສປປ ລາວ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍ ເປັນຕົ້ນໄປ.

ການພິຈາລະນາຕັດສິນ ກ່ຽວກັບການຮິບຊັບ ຫຼື ຮິບວັດຖຸສິ່ງຂອງໃນທີ່ປະຊຸມສານ ຕ້ອງມີຜູ້ຕາງໜ້າອົງການສືບສວນ-ສອບສວນ, ກະຊວງການຕ່າງປະເທດ, ກະຊວງຍຸຕິທຳ, ຜູ້ຕາງໜ້າສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນຂອງລັດທີ່ຮ້ອງຂໍ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງອົງການທີ່ມີສິດອຳນາດອື່ນ ຂອງ ສປປ ລາວ ເຂົ້າຮ່ວມ.

**ມາດຕາ 28 ສິດຂອງສານປະຊາຊົນ ໃນການພິຈາລະນາ ກ່ຽວກັບການຮິບຊັບ ແລະ/ຫຼື ຮິບວັດຖຸສິ່ງຂອງ**

ໃນການພິຈາລະນາ ກ່ຽວກັບການຮິບຊັບ ແລະ/ຫຼື ຮິບວັດຖຸສິ່ງຂອງ ຕາມຄຳຕັດສິນຂອງສານຕ່າງປະເທດ, ສານປະຊາຊົນ ແຫ່ງ ສປປ ລາວ ມີສິດ ດັ່ງນີ້:

1. ກວດກາກ່ຽວກັບການກະທຳຜິດ ທີ່ບົ່ງໄວ້ໃນຄຳຮ້ອງຂໍນັ້ນ ຕ້ອງເປັນການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຂອງ ສປປ ລາວ;
2. ກວດກາຄຳຮ້ອງຂໍການຮ່ວມມືນັ້ນ ບໍ່ຂັດກັບເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້;
3. ກວດກາຄືນ ຊັບ ຫຼື ວັດຖຸສິ່ງຂອງນັ້ນ ບໍ່ພົວພັນເຖິງການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຂອງ ສປປ ລາວ.

ຊັບ ແລະ ວັດຖຸສິ່ງຂອງ ທີ່ພົວພັນເຖິງການກະທຳຜິດ ທີ່ກຳນົດໄວ້ໃນກົດໝາຍ ຂອງ ສປປ ລາວ ອາດຈະຖືກຮິບເປັນຂອງ ສປປ ລາວ ຕາມຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 29 ການລຶບລ້າງຄຳສັ່ງ ຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ**

ຖ້າສານປະຊາຊົນ ພິຈາລະນາຄຳຮ້ອງຂໍ ກ່ຽວກັບການຮິບຊັບ ແລະ ຮິບວັດຖຸສິ່ງຂອງແລ້ວ ແຕ່ຫາກເຫັນວ່າບໍ່ມີເຫດຜົນ, ບໍ່ມີຂໍ້ມູນ ຫຼັກຖານ ພຽງພໍ ສານປະຊາຊົນ ກໍຈະຕັດສິນລຶບລ້າງຄຳສັ່ງ ຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງນັ້ນ.

**ມາດຕາ 30 ການມອບຊັບ ຫຼື ວັດຖຸສິ່ງຂອງໃຫ້ລັດທີ່ຮ້ອງຂໍ**

ໃນກໍລະນີສານປະຊາຊົນ ແຂວງ, ນະຄອນຫຼວງ ໄດ້ພິຈາລະນາຕັດສິນໃຫ້ສົ່ງ ຊັບ ຫຼື ວັດຖຸສິ່ງຂອງ ທີ່ຮິບນັ້ນ ໃຫ້ລັດທີ່ຮ້ອງຂໍແລ້ວ ອົງການໃຈກາງປະສານງານ ຕ້ອງສະເໜີໃຫ້ກະຊວງການຕ່າງປະເທດ ປະສານສົມທົບກັບລັດທີ່ຮ້ອງຂໍ ເພື່ອກະກຽມ ແລະ ດຳເນີນການມອບຊັບ ຫຼື ວັດຖຸສິ່ງຂອງ ພາຍໃນເວລາ ສາມສິບວັນ ຫຼື ພາຍໃນເວລາຕາມທີ່ໄດ້ບົ່ງໄວ້ໃນສົນທິສັນຍາ ນັບແຕ່ວັນໄດ້ລົງຄຳຕັດສິນ ເປັນຕົ້ນໄປ.

ອົງການໃຈກາງປະສານງານ ເປັນເຈົ້າການໃນການມອບ ຊັບ ຫຼື ວັດຖຸສິ່ງຂອງ ທີ່ສາມາດມອບໄດ້ ໃຫ້ລັດທີ່ຮ້ອງຂໍ ໂດຍມີຜູ້ຕາງໜ້າ ຈາກອົງການສືບສວນ-ສອບສວນ, ກະຊວງຍຸຕິທຳ, ກະຊວງການຕ່າງປະເທດ, ອົງການທີ່ກ່ຽວຂ້ອງ ແລະ ຜູ້ຕາງໜ້າລັດທີ່ຮ້ອງຂໍ ເຂົ້າຮ່ວມນຳ ພ້ອມທັງເຮັດບົດບັນທຶກໄວ້.

ໃນການມອບ ຊັບ ຫຼື ວັດຖຸສິ່ງຂອງ ທີ່ຖືກຮິບນັ້ນ ລັດທີ່ຮ້ອງຂໍ ຕ້ອງທົດແທນຄ່າໃຊ້ຈ່າຍໃນວຽກຕ່າງໆ ທີ່ໄດ້ດຳເນີນການຮິບຊັບ ຫຼື ຮິບວັດຖຸສິ່ງຂອງ ດັ່ງກ່າວ ຄືນໃຫ້ ສປປ ລາວ.

## ພາກທີ III
## ການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຂອງ ສປປ ລາວ

**ມາດຕາ 31 ການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ**

ການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຂອງ ສປປ ລາວ ໄປຍັງລັດທີ່ຖືກຮ້ອງຂໍ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ ມາດຕາ 10 ຂອງກົດໝາຍສະບັບນີ້ ຫຼື ກົດໝາຍຂອງລັດທີ່ຖືກຮ້ອງຂໍ.

**ມາດຕາ 32 ການສະເໜີການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ**

ອົງການດຳເນີນຄະດີອາຍາ ຫາກເຫັນວ່າມີຄວາມຈຳເປັນ ຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ໄປຍັງລັດທີ່ຖືກຮ້ອງຂໍ ໃນການປະກອບຫຼັກຖານ, ສົ່ງມອບເອກະສານ ກ່ຽວກັບການດຳເນີນຄະດີ, ການຍຶດ, ການອາຍັດ, ການຮິບຊັບ ແລະ ຮິບວັດຖຸສິ່ງຂອງ, ການປະຕິບັດຄຳຕັດສິນຂອງສານ ສປປ ລາວ ຫຼື ການຮ່ວມມືອື່ນ ທີ່ສອດຄ່ອງກັບມາດຕາ 7 ຂອງກົດໝາຍສະບັບນີ້ ຕ້ອງສະເໜີຫາອົງການໃຈກາງປະສານງານ ເພື່ອພິຈາລະນາຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ແກ່ ສປປ ລາວ.

**ມາດຕາ 33 ການພິຈາລະນາຂອງອົງການໃຈກາງປະສານງານ**

ພາຍຫຼັງ ອົງການໃຈກາງປະສານງານ ໄດ້ຮັບຄຳສະເໜີຈາກອົງການດຳເນີນຄະດີອາຍາ ຕ້ອງຄົ້ນຄວ້າຄຳສະເໜີດັ່ງກ່າວ ບົນພື້ນຖານ ສົນທິສັນຍາ ລະຫວ່າງ ສປປ ລາວ ກັບລັດທີ່ຖືກຮ້ອງຂໍ ແລະ ມາດຕາ 8 ຂອງກົດໝາຍສະບັບນີ້ ເມື່ອເຫັນວ່າສອດຄ່ອງແລ້ວ ຕ້ອງຍື່ນຄຳຮ້ອງຂໍ ໄປຍັງລັດທີ່ຖືກຮ້ອງຂໍ.

ມາດຕາ 34 ການເຂົ້າຮ່ວມການພິຈາລະນາ ໃນການປະຕິບັດຄຳຮ້ອງຂໍຢູ່ລັດທີ່ຖືກຮ້ອງຂໍ

ອົງການໃຈກາງປະສານງານ, ອົງການສືບສວນ-ສອບສວນ ພ້ອມດ້ວຍອົງການອື່ນທີ່ກ່ຽວຂ້ອງ ຕ້ອງເຂົ້າຮ່ວມການພິຈາລະນາ ໃນການປະຕິບັດຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຢູ່ລັດທີ່ຖືກຮ້ອງຂໍ ເຊັ່ນ ການຊອກບ່ອນຢູ່ ຫຼື ເອກະລັກຂອງບຸກຄົນ, ການຊອກຫາຊັບ ຫຼື ວັດຖຸສິ່ງຂອງ ທີ່ໄດ້ມາຈາກການກະທຳຜິດ, ທີ່ນຳໃຊ້ເຂົ້າໃນການກະທຳຜິດ, ການເອົາຄຳໃຫ້ການ, ການຍຶດ, ອາຍັດ ຫຼື ການຮິບຊັບ ແລະ ຮິບວັດຖຸສິ່ງຂອງ ເພື່ອຮັບປະກັນຜົນປະໂຫຍດໃນການດຳເນີນຄະດີອາຍາ ຢູ່ ສປປ ລາວ.

## ພາກທີ IV
## ອົງການໃຈກາງປະສານງານ

ມາດຕາ 35 ອົງການໃຈກາງປະສານງານ

ອົງການໃຈກາງປະສານງານ ໃນການຈັດຕັ້ງປະຕິບັດວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ແມ່ນອົງການໄອຍະການປະຊາຊົນສູງສຸດ.

ມາດຕາ 36 ສິດ ແລະ ໜ້າທີ່ ຂອງອົງການໃຈກາງປະສານງານ

ອົງການໃຈກາງປະສານງານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຂອງລັດທີ່ຮ້ອງຂໍ ແລະ ຂອງ ສປປ ລາວ;
2. ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ;
3. ຕິດຕາມ, ກວດກາ ກ່ຽວກັບການປະຕິບັດຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ;
4. ແຈ້ງໃຫ້ ລັດທີ່ຮ້ອງຂໍຮັບຊາບ ກ່ຽວກັບການປະຕິບັດຄຳຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ;
5. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ຂໍ້ຫ້າມ

ມາດຕາ 37 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ການເຄື່ອນໄຫວວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ສ້າງຜົນເສຍຫາຍໃຫ້ແກ່ລະບອບການເມືອງ, ຄວາມໝັ້ນຄົງຂອງຊາດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ກໍຄືຜົນປະໂຫຍດຂອງຊາດ;
2. ດຳເນີນການຮ່ວມມືລະຫວ່າງປະເທດທາງອາຍາ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດ;
3. ສ້າງອຸປະສັກ, ຂັດຂວາງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

4. ຂໍເອົາ, ທວງເອົາ, ໃຫ້ ຫຼື ຮັບສິນບົນຈາກບຸກຄົນອື່ນ ໃນວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 38 ຂໍ້ຫ້າມສຳລັບ ພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ຜູ້ອື່ນ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ ພັກພວກຂອງຕົນ;

2. ຂໍເອົາ, ທວງເອົາ, ໃຫ້ ຫຼື ຮັບສິນບົນ ແລະ ຍັກຍອກຊັບ ຫຼື ຂອງກາງ;

3. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາໃນການພິຈາລະນາການຮ່ວມມືລະຫວ່າງປະເທດທາງອາຍາ;

4. ເປີດເຜີຍຄວາມລັບ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການລັດທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການຄຸ້ມຄອງ ແລະ ກວດກາ
### ໝວດທີ 1
### ການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ

**ມາດຕາ 39 ອົງການຄຸ້ມຄອງ**

ລັດຖະບານ ແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ໂດຍມອບໃຫ້ອົງການໄອຍະການປະຊາຊົນສູງສຸດ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ປະກອບດ້ວຍ:

1. ອົງການໄອຍະການປະຊາຊົນສູງສຸດ;
2. ກະຊວງປ້ອງກັນຄວາມສະຫງົບ;
3. ສານປະຊາຊົນສູງສຸດ;
4. ກະຊວງການຕ່າງປະເທດ;
5. ກະຊວງຍຸຕິທຳ;
6. ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນສູງສຸດ**

ໃນການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ ແລະ ສົນທິສັນຍາ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

2. ຊີ້ນໍາ, ນໍາພາ ແລະ ກວດກາ ອົງການໄອຍະການປະຊາຊົນທຸກຂັ້ນ ໃນການປະຕິບັດຄໍາຮ້ອງຂໍການຮ່ວມມືທາງອາຍາ;

3. ເກັບໂຮມຂໍ້ມູນ, ສະຖິຕິ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ເພື່ອແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ;

4. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄໍາເຫັນ ຕໍ່ສົນທິສັນຍາ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ລະຫວ່າງ ສປປ ລາວ ກັບຕ່າງປະເທດ;

5. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ຕໍ່ຂັ້ນເທິງ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

2. ຊີ້ນໍາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຄໍາຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ;

3. ຮັບຄໍາຮ້ອງ ແລະ ສະເໜີ ໃຫ້ອົງການໃຈກາງປະສານງານ ກ່ຽວກັບການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ເອົາຄໍາໃຫ້ການ ແລະ ສະໜອງຂໍ້ມູນ ຫຼັກຖານ, ບ່ອນຢູ່, ເອກະລັກບຸກຄົນ, ກວດຄົ້ນ, ເກັບໂຮມຫຼັກຖານ, ຍຶດ ຫຼື ອາຍັດຊັບ ແລະ ຈັດສົ່ງນັກໂທດ ຫຼື ຜູ້ຖືກຫາ ທີ່ກ່ຽວຂ້ອງກັບຄະດີ ຕາມຄໍາຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ;

5. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄໍາເຫັນ ຕໍ່ສົນທິສັນຍາ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ລະຫວ່າງ ສປປ ລາວ ກັບຕ່າງປະເທດ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ຕໍ່ຂັ້ນເທິງ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງສານປະຊາຊົນສູງສຸດ**

ໃນການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ມີຄໍາເຫັນ ຕໍ່ ຮ່າງນະໂຍບາຍ ແລະ ຮ່າງກົດໝາຍ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

2. ແນະນໍາທາງດ້ານວິຊາການ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ໃຫ້ສານປະຊາຊົນຂັ້ນແຂວງ;

3. ຊີ້ນໍາ ສານປະຊາຊົນ ກ່ຽວກັບການພິຈາລະນາຄໍາຮ້ອງຂໍ ການຮ່ວມມືລະຫວ່າງປະເທດທາງອາຍາ;

4. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄໍາເຫັນ ຕໍ່ສົນທິສັນຍາ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ລະຫວ່າງ ສປປ ລາວ ກັບຕ່າງປະເທດ;

5. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ຕໍ່ຂັ້ນເທິງ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ໃນການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ມີຄໍາເຫັນ ຕໍ່ ຮ່າງນະໂຍບາຍ ແລະ ຮ່າງກົດໝາຍ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

2. ພົວພັນ ແລະ ປະສານສົມທົບກັບລັດທີ່ຮ້ອງຂໍ ຕາມການສະເໜີຂອງອົງການໃຈກາງປະສານງານ;

3. ຮັບ ແລະ ສົ່ງ ຄໍາຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຂອງລັດທີ່ຮ້ອງຂໍ ໄປຍັງອົງການໃຈກາງປະສານງານ;

4. ປະສານສົມທົບກັບອົງການໃຈກາງປະສານງານ ກ່ຽວກັບ ການສົ່ງຫຼັກຖານ, ການຍຶດ, ອາຍັດ, ການຮິບຊັບ ແລະ ຮິບວັດຖຸສິ່ງຂອງ ເພື່ອປະຕິບັດຕາມຄໍາຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ;

5. ແຈ້ງ ຫຼື ຮັບແຈ້ງຜົນການປະຕິບັດຄໍາຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ຢູ່ລັດທີ່ຮ້ອງຂໍ ໃຫ້ອົງການໃຈກາງປະສານງານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ;

6. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄໍາເຫັນ ຕໍ່ສົນທິສັນຍາ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ລະຫວ່າງ ສປປ ລາວ ກັບຕ່າງປະເທດ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ຕໍ່ຂັ້ນເທິງ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ ຮ່າງນະໂຍບາຍ ແລະ ຮ່າງກົດໝາຍ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;
2. ເຂົ້າຮ່ວມ, ຊຸກຍູ້, ຊ່ວຍເຫຼືອ ແລະ ປະສານສົມທົບກັບຂະແໜງການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;
3. ເກັບກຳສະຖິຕິ, ຂໍ້ມູນ ຂ່າວສານ ກ່ຽວກັບການປະຕິບັດວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;
4. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄຳເຫັນ ຕໍ່ສົນທິສັນຍາ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ລະຫວ່າງ ສປປ ລາວ ກັບຕ່າງປະເທດ;
5. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ຕໍ່ຂັ້ນເທິງ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ກັບອົງການທີ່ມີສິດອຳນາດ ຂອງ ສປປ ລາວ ກ່ຽວກັບການຮ່ວມມືລະຫວ່າງປະເທດທາງອາຍາ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານຮ່ວມມືລະຫວ່າງປະເທດທາງອາຍາ

**ມາດຕາ 46 ອົງການກວດກາ**

ອົງການກວດກາວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 39 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການກວດກາລັດຖະບານ.

**ມາດຕາ 47 ເນື້ອໃນການກວດກາ**

ການກວດກາ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

2. ການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ;

3. ບັນຫາອື່ນ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ.

**ມາດຕາ 48 ຮູບການການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ງົບປະມານ

**ມາດຕາ 49 ງົບປະມານ**

ງົບປະມານ ໃນການເຄື່ອນໄຫວວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ໄດ້ມາຈາກ ງົບປະມານຂອງລັດ, ການຮ່ວມມື, ການປະກອບສ່ວນຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຫຼື ການສະໜອງຂອງລັດທີ່ຮ້ອງຂໍ.

**ມາດຕາ 50 ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ**

ອົງການຄຸ້ມຄອງວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ງົບປະມານດັ່ງກ່າວ ດ້ວຍການຂຶ້ນແຜນງົບປະມານກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ເພື່ອສະເໜີຂຶ້ນເທິງພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 51 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 52 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 53 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 54 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້